# ທ່ານຄວນຮັບການສັກຢາປ້ອງພະຍາດຕັບອັກເສບ B ບໍ?



ພະຍາດຕັບອັກເສບ B ແມ່ນເຊື້ອໄວຣັສທີ່ທຳຮ້າຍຕັບ ແລະ ສາມາດເຮັດໃຫ້ເກີດມະເຮັງຕັບ.

ຫຼາຍຄົນບໍ່ຮູ້ວ່າເຂົາເຈົ້າຕິດເຊື້ອເພາະວ່າເຂົາເຈົ້າບໍ່ຮູ້ສຶກ ຫຼື ບໍ່ສະແດງອາການບໍ່ສະບາຍ, ແຕ່ເຂົາເຈົ້າສາມາດແຜ່ເຊື້ອໄວຣັດໄປສູ່ຜູ້ອື່ນໄດ້.

ມີວັກຊີນທີ່ປອດໄພ ແລະ ມີປະສິດທິພາບທີ່ສາມາດປ້ອງກັນພະຍາດຕັບອັກເສບ B ໄດ້. ທ່ານຈຳເປັນຕ້ອງສັກໃຫ້ສຳເລັດຊຸດການສັກຢາເພື່ອປ້ອງກັນໃຫ້ຄົບ.

## ພະຍາດຕັບອັກເສບ B ແມ່ນແຜ່ຈາກ:

- ຄົນຖືພາສູ່ລູກໃນເວລາເກີດ
- ການສຳພັດຈາກການມີເພດສຳພັນ
- ການສຳພັດກັບເລືອດຈາກຜູ້ຕິດເຊື້ອ
- ການໃຊ້ມີດໂກນໜວດ, ແປງຖູແຂ້ວ, ຫຼື ມີດຕັດ

## ໃຜທີ່ຄວນໄດ້ຮັບການສັກຢາປ້ອງກັນເຊື້ອພະຍາດ

- ເດັກເກີດໃໝ່ທັງໝົດ
- ເດັກນ້ອຍແລະຜູ້ໃຫຍ່ທີ່ບໍ່ໄດ້ຮັບການສັກຢາທັງໝົດທີ່ມີອາຍຸເຖິງ 59 ປີ, ໂດຍບໍ່ຄຳນຶງເຖິງປັດໃຈຄວາມສ່ຽງໃດໆ
- ຜູ້ໃຫຍ່ 60 ປີຂຶ້ນໄປທີ່ມີປັດໃຈສ່ຽງເຊັ່ນ:
  - ການມີເພດສຳພັນ
  - ການສຳພັດກັບເລືອດຜ່ານທາງຜິວໜັງ ຫຼື ເຍື່ອເມືອກ
  - ເດີນທາງໄປເຂດທີ່ມີອັດຕາການຕິດເຊື້ອຕັບອັກເສບ B ປານກາງ ຫຼື ສູງ
  - ການຕິດເຊື້ອພະຍາດຕັບຊຳເຮື້ອ ຫຼື HIV

**ສຳລັບຂໍ້ມູນເພີ່ມເຕີມ:**

**www.cdc.gov/hepatitis/hbv/**
**doh.wa.gov/hepbhub**

Hep B Hub
doh.wa.gov/hepbhub

Washington State Department of Health DOH 420-407 May 2022 Lao

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov.
ດັດແປງໂດຍການອະນຸຍາດຈາກ Minnesota Department of Health (ພະແນກສາທາລະນະສຸກຂອງລັດມິນນີໂຊຕາ)